University of Basel

# Gender and Labour in the Global South

Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**Developing policies to respond to youth unemployment**

## ການພັດທະນານະໂຍບາຍເພື່ອຕອບສະໜອງຕໍ່ການຫວ່າງງານຂອງໄວໜຸ່ມ

**Short description:**
ອ່ານວິທີທີ່ Christine Bigler ຊີ້ໃຫ້ເຫັນສິ່ງທ້າທາຍຂອງໄວໜຸ່ມ (ຫວ່າງງານ) ແລະ ນຳສະເໜີເຄື່ອງມືທີ່ເປັນປະໂຫຍດສຳລັບການພັດທະນານະໂຍບາຍຕ່າງໆໃນຂົງເຂດດັ່ງກ່າວ.

**Content:**

ເປັນຕົວຢ່າງໜຶ່ງຂອງປະເທດທີ່ມີຈຳນວນປະຊາກອນໄວໜຸ່ມເພີ່ມຂຶ້ນ. ຣະວັນດາ ເປັນປະເທດນ້ອຍ, ຍຶດຖືການກະສິກຳ ແລະ ມີປະຊາກອນໜາແໜ້ນຢູ່ໃນອາຟຣິກາຕາເວັນອອກກາງ. ປະຊາກອນຍັງມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ຄວນຈະສ້າງວຽກເຮັດງານທຳ 20,000 ຕຳແໜ່ງງານໃນແຕ່ລະປີ ເພື່ອຮອມໄວໜຸ່ມເຂົ້າສູ່ຕະຫຼາດແຮງງານ (Bigler et al. 2017). ໃນເຂດຕົວເມືອງ ມີອັດຕາການຫວ່າງງານຂອງໄວໜຸ່ມປະມານ 30 ສ່ວນຮ້ອຍ ຂອງໄວໜຸ່ມທີ່ຈົບການສຶກສາລະດັບມັດທະຍົມ ແລະ ມະຫາວິທະຍາໄລ (Government of Rwanda 2021).

ດັດຊະນີຕະຫຼາດແຮງງານໄວໜຸ່ມ: ຕົວຊີ້ວັດ

ການຫັນປ່ຽນ

1. ອັດຕາສ່ວນຂອງໄວໜຸ່ມທີ່ບໍ່ໄດ້ຢູ່ໃນການຈ້າງງານ, ການສຶກສາ ຫຼື ການຝຶກອົບຮົມ (NEET)
2. ອັດຕາສ່ວນກຸ່ມຫວ່າງງານທີ່ກ່ຽວຂ້ອງ
3. ອັດຕາທັກສະທີ່ບໍ່ກົງກັບຄວາມຕ້ອງການ

ເງື່ອນໄຂການເຮັດວຽກ

4. ອັດຕາຄວາມທຸກຍາກໃນການເຮັດວຽກ
5. ອັດຕາການຈ້າງງານຕ່ຳກວ່າ
6. ອັດຕາການຈ້າງງານນອກລະບົບ
7. ອັດຕາການຈ້າງງານທີ່ມີຄວາມສ່ຽງ
8. ອັດຕາສ່ວນໃນອາຊີບພື້ນຖານ
9. ອັດຕາສ່ວນໃນຂົງເຂດກະສິກຳ, ການປະມົງ ຫຼື ປ່າໄມ້

ການສຶກສາ

10. ອັດຕາສ່ວນທີ່ບໍ່ໄດ້ຜ່ານມັດທະຍົມສຶກສາ
11. ອັດຕາການບໍ່ຮູ້ໜັງສື
12. ຄະແນນການສອບເສັງທີ່ປະສົມປະສານ

Box 1: ດັດຊະນີຕະຫຼາດແຮງງານໄວໜຸ່ມ (Kudrzycki et al. 2020)

ການຫວ່າງງານຂອງໄວໜຸ່ມ ໂດຍສະເພາະໃນເຂດອານຸພາກພື້ນຊາຮາຣາອາຟຣິກາ (SSA) ຢູ່ໃນວາລະຂອງບັນດາຜູ້ກຳນົດນະໂຍບາຍແມ່ນສູງ (Sumberg et al. 2020). ໃນທົ່ວໂລກ ຈາກ 1.2 ຕື້ນຄົນ ມີເກືອບ 1 ຕື້ຄົນແມ່ນຢູ່ໃນປະເທດທີ່ກຳລັງພັດທະນາ. ນອກຈາກນັ້ນ, ຈຳນວນຄົນໃນກຸ່ມອາຍຸ 15-25 ປີ ແມ່ນກຳລັງເພີ່ມຂຶ້ນຢ່າງໄວວາໃນບັນດາປະເທດເຫຼົ່ານີ້ (International Fund for Agricultural Development 2019). ໃນ SSA, ມີ 60 ສ່ວນຮ້ອຍຂອງປະຊາກອນ ຫຼື 800 ລ້ານຄົນ ທີ່ຢູ່ໃນກຸ່ມອາຍຸໄວໜຸ່ມ ແລະ ໃນປີ 2100 ຈະມີ 50 ສ່ວນຮ້ອຍຈາກປະຊາກອນໄວໜຸ່ມຂອງໂລກທີ່ອາໄສຢູ່ໃນອາຟຣິກາ (International Labour Office 2020). ຄວາມຈິງຂໍ້ນີ້ ຖືໄດ້ວ່າເປັນໂອກາດ, ເນື່ອງຈາກວ່າຜູ້ທີ່ມີການສຶກສາທີ່ດີທີ່ສຸດທີ່ເຂົ້າສູ່ຕະຫຼາດແຮງງານນັ້ນ ມີສັກກະຍະພາບສຳລັບການປ່ຽນແປງທາງວິວັດທະນາການ. ໃນອີກທາງໜຶ່ງ ອາດສາມາດເບິ່ງເຫັນວ່າເປັນການເພີ່ມທະວີຄວາມບໍ່ສະເໝີພາບ ແລະ ຄວາມທຸກຍາກ ແລະ ເປັນປັດໄຈອັນໜຶ່ງຂອງຄວາມບໍ່ສະຖຽນລະພາບໃນຄວາມໝັ້ນຄົງ ແລະ ສັນຕິພາບ (World Economic Forum 2020).

ແນວໃດກໍຕາມ, ອັດຕາການຫວ່າງງານຂອງໄວໜຸ່ມໃນປະເທດກຳລັງພັດທະນາເປັນຕົວຊີ້ວັດທີ່ອ່ອນແອໃນຕົວ, ເນື່ອງຈາກເປັນການສະແດງພາບຂອງຕະຫຼາດແຮງງານທີ່ຈຳກັດ. ໂຄງການຄົ້ນຄວ້າ "ການເຊື່ອມໂຍງການສຶກສາກັບຕະຫຼາດແຮງງານ: ອາຊີວະສຶກສາ (TVET) ສາມາດປັບປຸງລາຍຮັບຂອງໄວໜຸ່ມພາຍໃຕ້ເງື່ອນໄຂໃດ?[1]" ພັດທະນາແນວທາງໃໝ່ຫຼາກຫຼາຍມິຕິ ເພື່ອວັດປະລິມານສະຖານະການຂອງຕະຫຼາດແຮງງານຂອງໄວໜຸ່ມໃນບັນດາປະເທດທີ່ມີລາຍຮັບໃນລະດັບຕໍ່າຫາລະດັບກາງ. "ດັດຊະນີຕະຫຼາດແຮງງານໄວໜຸ່ມສຳລັບບັນດາປະເທດທີ່ມີລາຍຮັບຕໍ່າ (YLILI)[2]" ປະກອບມີ 12 ຕົວຊີ້ວັດ (see box 1) ແບ່ງອອກເປັນສາມດ້ານຄື: ການຫັນເຂົ້າສູ່ຕະຫຼາດແຮງງານ, ສະພາບການເຮັດວຽກ ແລະ ການສຶກສາ. ດັດຊະນີ ສະແດງໃຫ້ເຫັນຮູບພາບລວມຂອງໄວໜຸ່ມໃນຕະຫຼາດແຮງງານຫຼາຍຂຶ້ນ ແລະ ອະນຸຍາດໃຫ້ມີການປຽບທຽບຂ້າມປະເທດໄດ້. ຂະໜາດຂອງດັດຊະນີ ມີຕັ້ງແຕ່ຕະຫຼາດແຮງງານໄວໜຸ່ມທີ່ມີປະໂຫຍດໃຊ້ງານໄດ້ແທ້ (100) ໄປຈົນເຖິງຕະຫຼາດແຮງງານທີ່ຂາດຄຸນສົມບັດ.

ແຜນພາບທີ 1: Youth Labour Market Index for Asia and Africa (Kudrzycki et al. 2020)

ທຸກໆປະເທດທີ່ຜ່ານການວິເຄາະ ສະແດງໃຫ້ເຫັນຕະຫຼາດແຮງງານທີ່ອ່ອນແອ ສຳລັບໄວໜຸ່ມ (ເບິ່ງໃນແຜນພາບທີ 1 ). ໃນ SSA, ອີກດ້ານໜຶ່ງ ຄົນໄວໜຸ່ມປະເຊີນໜ້າກັບສະພາບການເຮັດວຽກທີ່ລຳບາກ ແລະ ຂາດການສຶກສາ. ໃນທາງກົງກັນຂ້າມ, ການຫັນປ່ຽນຈາກໂຮງຮຽນໄປສູ່ຕະຫຼາດແຮງງານເປັນໄປຢ່າງໄວວາ. ນີ້ອາດເປັນສັນຍານຂອງຄວາມທຸກຍາກ, ໄວໜຸ່ມຈຳຕ້ອງເຮັດວຽກຫາລາຍໄດ້ເພື່ອລ້ຽງຊີບ.

[1] Research for Development (r4d) project. For more information: https://r4d.tvet4income.ethz.ch/the-project.html
[2] See: https://kof.ethz.ch/en/forecasts-and-indicators/indicators/kof-youth-labour-market-index.html

ນອກຈາກນີ້, ດັດຊະນີເປັນເຄື່ອງມືໜຶ່ງທີ່ສຳຄັນສຳລັບບັນດາຜູ້ກຳນົດນະໂຍບາຍ ໂດຍສະເພາະນະໂຍບາຍໃນລະດັບຊາດ. ດັ່ງທີ່ໄດ້ກ່າວມາຂ້າງເທິງ ດັດຊະນີປະກອບມີສາມດ້ານ. ໂດຍການແຍກດັດຊະນີ ຜູ້ກຳນົດນະໂຍບາຍສາມາດຮັບຜົນລັບຕາມຫຼັກຖານ ເພື່ອນິຍາມວ່າ ໃນສາມດ້ານນັ້ນ ແມ່ນດ້ານໃດທີ່ສະແດງເຖິງບັນຫາທີ່ເລັ່ງດ່ວນທີ່ສຸດ. ດ້ວຍ “ດັດຊະນີຕະຫຼາດແຮງງານໄວໜຸ່ມ KOF[3]”, ຜູ້ກຳນົດນະໂຍບາຍ ສາມາດຄາດຄະເນສະພາບການຂອງຕະຫຼາດແຮງງານໄວໜຸ່ມໃນ 193 ປະເທດ. ເຊິ່ງນີ້ໄດ້ຊ່ວຍເຂົາເຈົ້າ ໃນການພັດທະນານະໂຍບາຍຕະຫຼາດແຮງງານທີ່ອີງຕາມຫຼັກຖານ (Kudrzycki et al 2020).




ເພື່ອເອົາຕົວຢ່າງຈາກປະເທດ ຣວັນດາ ທີ່ຍົກມາຂ້າງເທິງ: ປະເທດຣວັນດາ ເຮັດໃຫ້ເຫັນຄະແນນທີ່ຕ່ຳຫຼາຍ ກ່ຽວກັບຕົວຊີ້ວັດ “ອັດຕາສ່ວນຂອງໄວໜຸ່ມທີ່ບໍ່ໄດ້ຢູ່ໃນການຈ້າງງານ, ການສຶກສາ ຫຼື ການຝຶກອົບຮົມ”. ນີ້ອາດຈະເປັນສັນຍານໃຫ້ບັນດາຜູ້ກຳນົດນະໂຍບາຍ ລົງທຶນໃສ່ດ້ານການສຶກສາ ແລະ ອາຊີວະສຶກສາໃຫ້ຫຼາຍຂຶ້ນ (KOF 2021).

## ເອກະສານອ້າງອີງ

Bigler, Christine; Amacker, Michèle; Ingabire, Chantal; Birachi, Eliud (2017): Rwanda's gendered agricultural transformation. A mixed-method study on the rural labour market, wage gap and care penalty. In *Women's Studies International Forum* 64, pp. 17–27. DOI: 10.1016/j.wsif.2017.08.004.

Government of Rwanda (2021): Labour Force Survey 2020. Thematic Report on Gender. With assistance of UN Women. National Institute of Statistics of Rwanda (NISR). Kigali, Rwanda, checked on 5/18/2021.

International Fund for Agricultural Development (2019): Creating opportunities for rural youth. 2019 Rural Development Report. International Fund for Agricultural Development, checked on 5/20/2021.

International Labour Office (2020): Getting Africa’s youth working. Taking a systems approach to create more & better g y jobs for young people in sub-Saharan Africa. With assistance of the LAB. International Labour Organization, checked on 5/20/2021.

[3] KOF: Swiss Economic Institute. For more information: https://kof.ethz.ch/en/

KOF (2021): Youth Labour Market Index. Rwanda. Swiss Economic Institute, Switzerland.

Kudrzycki, Bartlomiej; Lefoll, Erwin; Günther, Isabel (2020): Youth Labor Market Index for Africa and Asia. LELAM-TVET4INCOME PROJECT - R4D-Employment Module, NADEL, ETH Zürich.

Sumberg, James; Flynn, Justin; Mader, Philip; Mwaura, Grace; Oosterom, Marjoke; Sam-Kpakra, Robert; Shittu, Ayodele Ibrahim (2020): Formal-sector employment and Africa's youth employment crisis: Irrelevance or policy priority? In *Dev Policy Rev* 38 (4), pp. 428–440. DOI: 10.1111/dpr.12436.

World Economic Forum (2020): The children’s continent: keeping up with Africa's growth. Edited by Bandar Hajjar. Available online at https://www.weforum.org/agenda/2020/01/the-children-s-continent/.